ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

ກົມຈັດຕັ້ງ ແລະ ພະນັກງານ

ເລກທີ 0152 /ກຈພ

ນະຄອນຫຼວງວຽງຈັນ, ວັນທີ 21.01.2019

# ແຈ້ງການ

ຮຽນ: - ຫົວໜ້າບັນດາກົມ, ສະຖາບັນ ແລະ ສູນ ອ້ອມຂ້າງກະຊວງກະສິກຳ ແລະ ປ່າໄມ້

- ອຳນວຍການບັນດາວິທະຍາໄລ ກປ ແລະ ໂຮງຮຽນຊົນລະປະທານ ຊັ້ນສູງທ່າງ່ອນ ທີ່ຂຶ້ນກັບ ກະຊວງ ກະສິກຳ ແລະ ປ່າໄມ້.

ເລື່ອງ: ການຄວບຕຳແໜ່ງບໍລິຫານລັດ ແລະ ຮັບຜິດຊອບວຽກໂຄງການ.

- ອີງຕາມ ຂໍ້ຕົກລົງ ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກົມຈັດຕັ້ງ ແລະ ພະນັກງານ, ເລກທີ 3687/ກປ, ລົງວັນທີ 03 ສິງຫາ 2017.
- ອີງຕາມ ແຈ້ງການ ເລກທີ 1375/ກປ, ລົງວັນທີ 06 ທັນວາ 2018 ກ່ຽວກັບການກວດກາຕຳແໜ່ງບໍລິຫານ ສຳລັບຜູ້ທີ່ຮັບຜິດຊອບວຽກງານໂຄງການ.
- ອີງຕາມ ການຄົ້ນຄວ້າ ແລະ ສະເໜີຂອງພະແນກຄຸ້ມຄອງ ແລະ ພັດທະນາຊັບພະຍາກອນມະນຸດ

ກົມຈັດຕັ້ງ ແລະ ພະນັກງານ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ: ຜ່ານການໄດ້ຮັບເອກະສານລາຍງານຂອງຫ້ອງການ, ບັນດາກົມ, ສະຖາບັນ, ສູນ, ບັນດາວິທະຍາໄລ ແລະ ໂຮງຮຽນທີ່ຂຶ້ນກັບກະຊວງກະສິກຳ ແລະ ປ່າໄມ້ ກ່ຽວກັບການຄວບຕຳແໜ່ງ ຄື ຕຳແໜ່ງຮັບຜິດຊອບວຽກໂຄງການ ແລະ ຕຳແໜ່ງບໍລິຫານລັດ. ຜ່ານການຄົ້ນຄວ້າຂອງກົມຈັດຕັ້ງ ແລະ ພະນັກງານເຫັນວ່າ: ມີບາງພາກສ່ວນພະນັກງານ-ລັດຖະກອນຂອງຕົນຍັງຄວບຕຳແໜ່ງບໍລິຫານລັດ ແລະ ຕຳແໜ່ງຮັບຜິດຊອບວຽກງານໂຄງການ, ສະນັ້ນ. ເພື່ອຫຼີກເວັ້ນບໍ່ໃຫ້ກະທົບກັບວຽກງານເບື້ອງລັດ ຈຶ່ງຂໍແຈ້ງການມາຍັງບັນດາທ່ານໃຫ້ຈັດຕັ້ງປະຕິບັດຕາມແຈ້ງການສະບັບ ເລກທີ 1375/ກປ, ລົງວັນທີ 06 ທັນວາ 2018 ເລື່ອງໃຫ້ກວດກາຕຳແໜ່ງບໍລິຫານ ສຳລັບຜູ້ທີ່ຮັບຜິດຊອບວຽກງານໂຄງການ ຢ່າງເຂັ້ມງວດ. ກໍລະນີພາກສ່ວນໃດຫາກມີການຄວບຕຳແໜ່ງລະຫວ່າງຕຳແໜ່ງບໍລິຫານລັດ ແລະ ຮັບຜິດຊອບວຽກງານໂຄງການສະເໜີໃຫ້ທ່ານຄົ້ນຄວ້າພິຈາລະນາຈັດວາງສັບຊ້ອນພະນັກງານ-ລັດຖະກອນໃຫ້ເໝາະສົມດ້ວຍ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດ ຕາມແຈ້ງການນີ້ດ້ວຍ.

ຫົວໜ້າກົມຈັດຕັ້ງ ແລະ ພະນັກງານ

ນ.ພອງເພັດ ປູ້ວັງ

ສຳເນົາສົ່ງ:
- ທ່ານ ລັດຖະມົນຕີ, ຮອງລັດຖະມົນຕີ (ເພື່ອລາຍງານ)
- ເກັບມ້ຽນ